ທ່ານ ບຸນກອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 038 /ອອປສ

ນະຄອນຫຼວງວຽງຈັນ, ວັນທີ 18/10/2012.

# ຂໍ້ກໍານົດ

## ວ່າດ້ວຍລະບອບແບບແຜນວິທີເຮັດວຽກຂອງ ຄະນະກໍາມະການໄອຍະການປະຊາຊົນ

---

- ອີງຕາມ: ມາດຕາ 23 ແລະ 29 ຂອງກົດໝາຍ ວ່າດ້ວຍອົງການໄອຍະການປະຊາຊົນສະບັບປັບປຸງ ປີ 2009;
- ອີງຕາມ: ມະຕິຕົກລົງຂອງຄະນະປະຈໍາສະພາແຫ່ງຊາດສະບັບເລກທີ 043/ຄປຈ, ລົງວັນທີ 28 ພຶດສະພາ 2012 ວ່າດ້ວຍການແຕ່ງຕັ້ງ ຄະນະກໍາມະການໄອຍະການປະຊາຊົນ;
- ອີງຕາມ: ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ອົງການໄອຍະການປະຊາຊົນໃນສະເພາະໜ້າ ແລະ ຍາວນານ;
- ອີງຕາມ: ການຕົກລົງເຫັນດີເປັນເອກກະພາບຂອງກອງປະຊຸມ ຄະນະກໍາມະການໄອຍະການປະຊາຊົນຄັ້ງວັນທີ 14 ກັນຍາ 2012.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດອອກຂໍ້ກໍານົດວ່າດ້ວຍແບບແຜນວິທີເຮັດວຽກຂອງຄະນະກໍາມະການໄອຍະການປະຊາຊົນດັ່ງນີ້:

<u>ມາດຕາ1</u>: <u>ວ່າດ້ວຍທີ່ຕັ້ງ ແລະ ພາລະບົດບາດ</u>.

ຄະນະກໍາມະການໄອຍະການປະຊາຊົນ ແມ່ນການຈັດຕັ້ງໜຶ່ງຂອງອົງການໄອຍະການປະຊາຊົນສູງສຸດ ຕາມມະຕິຕົກລົງແຕ່ງຕັ້ງຂອງຄະນະປະຈໍາສະພາແຫ່ງຊາດ, ມີພາລະບົດບາດຕົກລົງບັນຫາທີ່ມີຄວາມສໍາຄັນ ແລະ ມີລັກສະນະຍຸດທະສາດ ກ່ຽວກັບວຽກງານຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນໃຫ້ລະບົບຂອງອົງການໄອຍະການປະຊາຊົນ ເຄື່ອນໄຫວຢ່າງມີປະສິດທິພາບ.

**ມາດຕາ2: ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດ.**

ຄະນະກຳມະການໄອຍະການປະຊາຊົນ ມີໜ້າທີ່ ແລະ ສິດດັ່ງນີ້:

1) ຕົກລົງຮັບຮອງເອົາແຜນຍຸດທະສາດ ກ່ຽວກັບການພັດທະນາວຽກງານໄອຍະການ;
2) ຄົ້ນຄ້ວາຜ່ານຮ່າງລະບຽບກົດໝາຍ ຂອງອົງການໄອຍະການປະຊາຊົນ;
3) ຕົກລົງຮື້ຟື້ນຄະດີທີ່ມີຄວາມຫຍຸ້ງຍາກສັບສົນ;
4) ຄົ້ນຄ້ວາຜ່ານກ່ຽວກັບການແຕ່ງຕັ້ງ,ໂຍກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການ, ບັນດາກົມ, ສະຖາບັນຄົ້ນຄ້ວາ ແລະ ຝຶກອົບຮົມໄອຍະການ ຂອງອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າ ແລະ ຮອງຫົວໜ້າ ອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ເຂດ;
5) ຄົ້ນຄ້ວາຜ່ານກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກກົງຈັກຂອງ ອົງການໄອຍະການປະຊາຊົນສູງສຸດ;
6) ຄົ້ນຄ້ວາ, ຕົກລົງແຜນການ, ແຜນງົບປະມານປະຈຳປີຂອງອົງການໄອຍະການປະຊາຊົນ;
7) ຕົກລົງບັນຫາອື່ນທີ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເຫັນວ່າມີຄວາມຈຳເປັນ;

**ມາດຕາ3: ວ່າດ້ວຍແບບແຜນວິທີເຮັດວຽກ.**

ຄະນະກຳມະການໄອຍະການປະຊາຊົນ ປະຕິບັດລະບອບແບບແຜນດັ່ງນີ້:

1). ຄະນະກຳມະການໄອຍະການປະຊາຊົນ ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ຄົ້ນຄ້ວາປຶກສາຫາລື ແລະ ຕົກລົງເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ, ຈັດຕັ້ງປະຕິບັດຕາມມະຕິຢ່າງເຂັ້ມງວດ ແລະ ມີການຊຸກຍູ້ຕິດຕາມກວດກາ ການປະຕິບັດແຜນການໃນແຕ່ລະໄລຍະ;

2). ຄະນະກຳມະການໄອຍະການປະຊາຊົນ ຖືເອົາກອງປະຊຸມຄົບຄະນະສະໄໝສາມັນ ຫຼື ວິສາມັນເປັນລະບອບແບບແຜນວິທີເຮັດວຽກ ໃນການເຄື່ອນໄຫວປະຕິບັດພາລະບົດບາດຂອງຕົນ ເພື່ອຄົ້ນຄ້ວາປຶກສາຫາລື, ຕົກລົງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເປັນຍຸດທະສາດຢ່າງມີຈຸດສຸມ ແລະ ທັນການ;

3). ມີຄວາມຮັບຜິດຊອບສູງ, ເຂັ້ມງວດໃນການຕັດສິນວຽກງານເປັນໝູ່ຄະນະ ແລະ ປະຕິບັດລະບອບທັນລົງຮາກຖານ ແລະ ຕິດແທດກັບວຽກງານຕົວຈິງ.

4). ປະຕິບັດລະບອບການປະສານງານເປັນປົກກະຕິລະຫ່ວາງຄະນະກຳມະການໄອຍະການປະຊາຊົນ ກັບຄະນະພັກ-ຄະນະນຳ ອົງການໄອຍະການປະຊາຊົນສູງສຸດ, ກັບສາຍຕັ້ງ-ສາຍຂວາງ ສູນກາງ ແລະ ທ້ອງຖິ່ນ, ສ້າງແຜນນຳໃຊ້ກອງເລຂາຂອງຕົນໃຫ້ຖືກຕ້ອງຕາມພາລະບົດບາດ ແລະ ກົດໝາຍໄດ້ກຳນົດໄວ້;

**ມາດຕາ4: ວ່າດ້ວຍລະບອບປະຊຸມ.**

ຄະນະກຳມະການໄອຍະການປະຊາຊົນມີລະບອບປະຊຸມດັ່ງນີ້:

ຜັນຂະຫຍາຍເນື້ອໃນຈິດໃຈ ຂອງບົດບັນທຶກກອງປະຊຸມນັ້ນເຂົ້າສູ່ວຽກງານຕົວຈິງ;

4) ສະໜອງຂໍ້ມູນຂ່າວສານ ແລະ ເອກະສານຕ່າງໆທີ່ຈຳເປັນ ໃຫ້ສະມາຊິກຂອງຄະນະກຳມະການໄອຍະການປະຊາຊົນຢ່າງເປັນປົກກະຕິ;

5) ການກະກຽມ ແລະ ດຳເນີນກອງປະຊຸມຄົບຄະນະຂອງຄະນະກຳມະການໄອຍະການປະຊາຊົນແຕ່ລະຄັ້ງຕ້ອງໄດ້ສະໜອງເອກະສານຂໍ້ມູນໃຫ້ແຕ່ລະທ່ານ ກ່ອນຈະດຳເນີນກອງປະຊຸມ 2 ມື້.

1) ສະຫລຸບສັງລວມສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງອົງການໄອຍະການປະຊາຊົນ ເພື່ອລາຍງານໃຫ້ຄະນະກຳມະການໄອຍະການປະຊາຊົນຊາບ ຢ່າງເປັນປົກກະຕິໃນແຕ່ລະ 6 ເດືອນ ແລະ 1 ປີ.

<u>ມາດຕາ7</u>: <u>ວ່າດ້ວຍການຈັດຕັ້ງປະຕິບັດ</u>

ສະມາຊິກ ຄະນະກຳມະການໄອຍະການປະຊາຊົນ ແລະ ພະນັກງານກອງເລຂາທຸກທ່ານ ຕ້ອງມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ;

ຜ່ານການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້, ຖ້າເຫັນບັນຫາໃດມີຄວາມຫຍຸ້ງຍາກບໍ່ສອດຄ່ອງຕ້ອງລາຍງານກອງເລຂາຄະນະກຳມະການໄອຍະການປະຊາຊົນ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະກຳມະການໄອຍະການປະຊາຊົນ ພິຈາລະນາ ແລະ ຕົກລົງແກ້ໄຂຢ່າງທັນການ.

<u>ມາດຕາ8</u>: ຂໍ້ກຳນົດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

ຄຳສານ ສຸວົງ